# ໜ່ວຍພັກກົມເງິນຕາມີຄວາມພ້ອມໃນການສ້າງໃຫ້ເປັນໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານສາມສະໄໝຊ້ອນ




*ຂ່າວ:ຣັດສະໝີ ດວງສັດຈະ

ສະຫາຍ ສຸພັດ ໂຄດໂຍທາ ເລຂາໜ່ວຍພັກ ຫົວໜ້າກົມເງິນຕາ-ຄັງສາງ ທະນາຄານແຫ່ງ ສປປ ລາວ ໄດ້ຢືນຢັນຄວາມພ້ອມ ໃນການສ້າງໜ່ວຍພັກກົມເງິນຕາ-ຄັງສາງໃຫ້ເປັນໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ສາມສະໄໝຊ້ອນ ແລະ ໃນປະຈຸບັນພວມໄດ້ສະເໜີໄປຍັງອົງຄະນະພັກຂັ້ນເທິງເພື່ອຄົ້ນຄ້ວາຮັບຮອງ ແລະ ມອບນາມມະຍົດໃນຂັ້ນຕໍ່ໄປ.

ໜ່ວຍພັກກົມເງິນຕາ-ຄັງສາງ ສ້າງຕັ້ງຂຶ້ນໃນປີ 1998 ເພື່ອຈັດຕັ້ງປະຕິບັດພາລະບົດບາດຜັນຂະຫຍາຍແນວທາງຂອງພັກ, ກົດໝາຍຂອງລັດກ່ຽວກັບເງິນຕາຊີ້ນຳ ນຳພາໃນການຄົ້ນຄ້ວາຂໍ້ກຳນົດ ແລະ ລະບຽບການຄຸ້ມຄອງຄັງສາງ ການຈັດຈຳໜ່າຍທະນະບັດ, ຈັດພິມທະນະບັດ ແລະ ການຖອນທະນະບັດຄືນອອກຈາກຂອດຈາລະຈອນ, ທຳລາຍທະນະບັດຂາດມຸ່ນເຊື່ອມຄຸນນະພາບ, ປົກປັກຮັກສາສາງວັດຖຸມີຄ່າ ແລະ ສາງທະນະບັດຂອງລັດ, ໃນປັດຈຸບັນໜ່ວຍມີສະມາຊິກພັກທັງໝົດ 13 ສະຫາຍທີ່ເຮັດໜ້າທີ່ ຢູ່ກົມເງິນຕາ-ຄັງສາງ ແລະ ໂຮງພິມທະນະບັດ.

ໃນຕະຫຼອດໄລຍະການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ III ຂອງໜ່ວຍພັກໃນໄລຍະຜ່ານມາສາມາດຍາດໄດ້ບັນດາຜົນງານອັນພົ້ນເດັ່ນໃນຫຼາຍດ້ານໂດຍສະເພາະຍັງໄດ້ສືບຕໍ່ຍົກສູງວຽກງານການເມືອງແນວຄິດ ແລະ ການຈັດຕັ້ງໂດຍໄດ້ຖືເອົາວຽກງານວິຊາສະເພາະເປັນໃຈກາງ, ເອົາວຽກງານປັບປຸງກໍ່ສ້າງ ແລະ ຂະຫຍາຍພັກເປັນສຳຄັນໂດຍເລັ່ງໃສ່ການສ້າງສະມາຊິກພັກກົມກອງແຂງ, ອົງການມະຫາຊົນແຂງ ແນ່ໃສ່ເພື່ອເປັນເສນາທິການໃຫ້ແກ່ຄະນະໜ່ວຍພັກ ແລະ ອຳນາດການປົກຄອງຂັ້ນຂອງຕົນ.